*ລະບົບການປົກປ້ອງ ແລະ ການສະໜັບສະໜູນລັດຄາລິຟໍເນັຍ*
*ໂທຟຣີ (800) 776-5746*

# ການເຂົ້າເຖິງການດູແລທາງການແພດຢ່າງທັນເວລາ

*ພຶດສະພາ 2016, ເອກະສານ #5556.12*

ກົດໝາຍລັດຄາລິຟໍເນັຍບອກວ່າ ແຜນການດູແລແບບມີການຄຸ້ມຄອງຕ້ອງຮັບປະກັນໃຫ້ທ່ານໄດ້ຮັບການເຂົ້າເຖິງການດູແລເບິ່ງແຍງສຸຂະພາບຢ່າງທ່ວງທັນເວລາ.[1] ສິ່ງຕໍ່ໄປນີ້ແມ່ນາຂອບເຂດເວລາສໍາລັບການໄດ້ຮັບການດູແລເບິ່ງແຍງ:

## ປະເພດການນັດໝາຍ ແລະ ຂອບເຂດເວລາ

- ການນັດໝາຍທີ່ບໍ່ຮີບດ່ວນກັບທ່ານໝໍດູແລປະຈໍາຂອງທ່ານພາຍໃນ 10 ວັນເຮັດວຽກນັບຈາກການຮ້ອງຂໍຂອງທ່ານ*.
- ການນັດໝາຍທີ່ບໍ່ຮີບດ່ວນກັບຜູ້ຊ່ຽວຊານໃດໜຶ່ງພາຍໃນ 15 ວັນເຮັດວຽກນັບຈາກການຮ້ອງຂໍຂອງທ່ານ*.
- ການນັດໝາຍທີ່ບໍ່ຮີບດ່ວນສໍາລັບການບໍລິການປະກອບ (ເຊັ່ນວ່າ ເອັກສະເຣ ແລະ ອື່ນໆ) ເພື່ອບົ່ງມະຕິພະຍາດ ຫຼື ປິ່ນປົວການບາດເຈັບ, ການເຈັບປ່ວຍ ຫຼື ບັນຫາສຸຂະພາບອື່ນພາຍໃນ 15 ວັນເຮັດວຽກນັບຈາກການຮ້ອງຂໍຂອງທ່ານ.*
- ການນັດໝາຍທີ່ບໍ່ຮີບດ່ວນກັບຜູ້ໃຫ້ການດູແລສຸຂະພາບຈິດທີ່ບໍ່ແມ່ນທ່ານໝໍພາຍໃນ 10 ວັນເຮັດວຽກນັບຈາກການຮ້ອງຂໍຂອງທ່ານ*.

---

[1] ປະມວນກົດໝາຍວ່າດ້ວຍສຸຂພາບ ແລະ ຄວາມປອດໄພລັດຄາລິຟໍເນັຍ, ຂໍ້ທີ 1367.03. ຫົວບົດ 28 ປະມວນກົດລະບຽບລັດຄາລິຟໍເນັຍ, ຂໍ້ທີ 1300.67.2.2. ກົດລະບຽບຍັງລວມເອົາເວລາລໍຖ້າສໍາລັບການດູແລສາຍຕາ, ແຂ້ວ ແລະ ການດູແລເບິ່ງແຍອື່ນ. ນອກນັ້ນ ໃຫ້ເບິ່ງ http://wpso.dmhc.ca.gov/regulations/docs/13CCRP.pdf.

– ການນັດໝາຍຮີບດ່ວນທີ່ບໍ່ຈຳເປັນຕ້ອງມີການອະນຸມັດກ່ອນລ່ວງໜ້າພາຍໃນ 48 ຊົ່ວໂມງນັບຈາກການຮ້ອງຂໍຂອງທ່ານ.
– ການນັດໝາຍຮີບດ່ວນທີ່ຈຳເປັນຕ້ອງມີການອະນຸມັດກ່ອນລ່ວງໜ້າພາຍໃນ 96 ຊົ່ວໂມງນັບຈາກການຮ້ອງຂໍຂອງທ່ານ.

## ເວລາລໍຖ້າທາງໂທລະສັບ

ການເຂົ້າເຖິງທາງໂທລະສັບ 24 ຊົ່ວໂມງຕໍ່ມື້ 7 ມື້ຕໍ່ອາທິດ ເພື່ອໂອ້ລົມກັບຜູ້ຊ່ຽວຊານສຸຂະພາບໃດໜຶ່ງເພື່ອຕັດສິນກຳນົດວ່າຄວາມຕ້ອງການທາງການແພດຂອງທ່ານມີຄວາມຮີບດ່ວນສໍ່າໃດ. ເວລາລໍຖ້າບໍ່ສາມາດເກີນ 30 ນາທີ.

ການໂທຫາຝ່າຍບໍລິການລູກຄ້າໃນລະຫວ່າງຊົ່ວໂມງເຮັດວຽກປົກກະຕິ. ເວລາລໍຖ້າບໍ່ສາມາດເກີນ 10 ນາທີ.

## ຂໍ້ຍົກເວັ້ນ

*ການດູແລແບບປ້ອງກັນ ແລະ ການດູແລຕິດຕາມຜົນເປັນຊ່ວງໄລຍະ.

*ສາມາດຂະຫຍາຍເວລາລໍຖ້າການນັດໝາຍອອກໄປໄດ້ ຖ້າຜູ້ໃຫ້ການດູແລສຸຂະພາບຂອງທ່ານກຳນົດວ່າເວລາລໍຖ້າທີ່ດົນກວ່າຈະບໍ່ເປັນອັນຕະລາຍຕໍ່ກັບສຸຂະພາບຂອງທ່ານ.

ທ່ານໝໍດູແລປະຈຳຂອງທ່ານສາມາດສະເໜີໃຫ້ທ່ານການນັດໝາຍກັບທ່ານໝໍດູແລປະຈຳ, ຜູ້ຊ່ຽວຊານພະຍາບານ ຫຼື ຜູ້ຊ່ວຍທ່ານໝໍປິ່ນປົວພາຍໃນມື້ດຽວກັນ ຫຼື ມື້ຕໍ່ໄປຈາກເວລາທີ່ທ່ານຮ້ອງຂໍການນັດໝາຍໃດໜຶ່ງ. ນີ້ເອີ້ນວ່າ "ການເຂົ້າເຖິງຂັ້ນສູງ". ຖ້າທ່ານບໍ່ຕ້ອງການການນັດໝາຍນີ້, ການນັດໝາຍຂອງທ່ານຈະຖືກກຳນົດເປັນວັນທີພາຍຫຼັງ.

ຈະເປັນແນວໃດຖ້າບໍ່ມີຜູ້ໃຫ້ບໍລິການພຽງພໍໃນເຂດພື້ນທີ່ຂອງຂ້ອຍ?

ກົດໝາຍບອກວ່າຖ້າທ່ານບໍ່ສາມາດໄດ້ຮັບການນັດໝາຍຢ່າງທັນເວລາໃນເຂດພື້ນທີ່ຂອງທ່ານເນື່ອງຈາກບໍ່ມີຜູ້ໃຫ້ບໍລິການພຽງພໍ, ແຜນສຸຂະພາບຂອງທ່ານຕ້ອງຊ່ວຍທ່ານໄດ້ຮັບການນັດໝາຍກັບຜູ້ໃຫ້ບໍລິການທີ່ເໝາະສົມ.

ສິ່ງທີ່ທ່ານສາມາດເຮັດຖ້າທ່ານບໍ່ໄດ້ຮັບການເຂົ້າເຖິງຢ່າງທ່ວງທັນເວລາ:

1. ຮ້ອງຮຽນຫາແຜນສຸຂະພາບຂອງທ່ານ.

2. ຍື່ນຄຳຮ້ອງຮຽນໂດຍການໂທຫາສາຍຊ່ວຍເຫຼືອຕາມເບີໂທຟຣີຂອງພະແນກການດູແລແບບມີການຄຸ້ມຄອງທີ່ເບີ (888) 466-2219, TDD: (877) 688-9891 ຫຼື http://www.dmhc.ca.gov/fileacomplaint.aspx#.Vvlk6tIrKUk
3. ຕິດຕໍ່ຫາ Disability Rights California ທີ່ເບີໂທຟຣີ (800) 776-5746, TTY (800) 719-5798 ຫຼື http://www.disabilityrightsca.org

ພວກເຮົາຕ້ອງການໄດ້ຍິນຈາກທ່ານ! ກະລຸນາເຮັດສຳເລັດການສຳຫຼວດຕໍ່ໄປນີ້ກ່ຽວກັບເອກະສານຕີພິມຂອງພວກເຮົາ ແລະ ບອກໃຫ້ພວກເຮົາຮູ້ວ່າພວກເຮົາເປັນແນວໃດ! https://docs.google.com/forms/d/1d6ezTI2M5UMAWU66exLbc1SQ9wDPzvtuS3AGR4-cgwE/viewform?c=0&w=1

*Disability Rights California ໄດ້ຮັບທຶນຈາກຫຼາກຫຼາຍແຫຼ່ງທຶນ, ສຳລັບລາຍຊື່ຄົບຖ້ວນຂອງຜູ້ໃຫ້ທຶນ, ໃຫ້ເຂົ້າເບິ່ງ* http://www.disabilityrightsca.org/Documents/ListofGrantsAndContracts.html.